**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1199 / ອຄ.ຫຄວ

ນະຄອນຫຼວງວຽງຈັນ, ວັນທີ 04 ກໍລະກົດ 2014

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ

ເລື່ອງ: ການຂຶ້ນທະບຽນວິສາຫະກິດ ໃນທຸລະກິດທີ່ປຶກສາດ້ານຕ່າງໆ

ເພື່ອແກ້ໄຂສະພາບ ແລະ ສະກັດກັ້ນ ຜົນເສັຍຫາຍທີ່ເກີດຈາກການສວຍໃຊ້ຊື່ປະເພດທຸລະກິດທີ່ປຶກສາໃນໃບທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດ ໂດຍບໍ່ສອດຄ່ອງກັບວັດຖຸປະສົງດັ່ງທີ່ກຳລັງເກີດຂຶ້ນ ແຜ່ຫຼາຍໃນປະຈຸບັນ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ການດຳເນີນທຸລະກິດທີ່ປຶກສາ ຫລື ທຸລະກິດບໍລິການໃຫ້ຄຳປຶກສາໃນທຸກດ້ານ ຕ້ອງມາແຈ້ງຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເທົ່ານັ້ນ ແລະ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ຢຸດເຊົາການພິຈາລະນາຂຶ້ນທະບຽນວິສາຫະກິດ (ຊົ່ວຄາວ) ໃນທຸລະກິດດັ່ງກ່າວນັບແຕ່ວັນທີ່ແຈ້ງການສະບັບນີ້ ໄດ້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການເປັນຢ່າງອື່ນ;

2. ວິສາຫະກິດທີ່ປຶກສາ ທີ່ທາງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງໄດ້ຂຶ້ນທະບຽນວິສາຫະກິດໃຫ້ໃນໄລຍະທີ່ຜ່ານມາ ແມ່ນບໍ່ໃຫ້ລົບລ້າງ ແຕ່ໃຫ້ແຈ້ງລາຍຊື່ວິສາຫະກິດ ພ້ອມທັງອັດສຳເນົາໃບທະບຽນວິສາຫະກິດ ສົ່ງໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຊ້າສຸດບໍ່ໃຫ້ເກີນທ້າຍເດືອນ 8 ປີ 2014 ນີ້;

3. ສຳລັບວິສາຫະກິດທີ່ປຶກສາ ທີ່ເຄື່ອນໄຫວທຸລະກິດ ນອກຂອບເຂດວັດຖຸປະສົງ ເຊັ່ນ ການອອກເຊັກ, ການຊື້-ຂາຍດັດສະນີ, ຮຸ້ນ, ຄຳ, ນ້ຳມັນ, ເງິນຕາ ແລະ ຜະລິດຕະພັນເງິນໃນຕະຫລາດເງິນຢູ່ຕ່າງປະເທດ, ການປ່ອຍເງິນ ຫລື ການເຄື່ອນໄຫວທຸລະກຳທາງດ້ານການເງິນຕ່າງໆ ແມ່ນໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ເກັບກຳສະພາບລະອຽດ ແລ້ວລາຍງານມາຍັງ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອປະສານກັບພາກສ່ວນກ່ຽວຂ້ອງ ດຳເນີນມາດຕະການຢ່າງເຂັ້ມງວດ ຕາມກົດໝາຍ ຕໍ່ໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ຮຽວສະຫວາດ ສະແຫວງສຶກສາ